# ປະກາດຮັບສະໝັກຄູຝຶກ

## ກ່ຽວກັບການສ້າງຄວາມສາມາດດ້ານກະສິກຳສະຫຼາດດ້ານດິນຟ້າອາກາດ (CSA) ຕໍ່ການຜະລິດພືດຜັກ

**I. ພາລະໜ້າທີ່ຂອງສະມາຄົມເຊດາ**

ສະມາຄົມພັດທະນາກະສິກຳແລະສິ່ງແວດແບບຍືນຍົງ (ສກສຍ) ແມ່ນສະມາຄົມບໍ່ຫວັງຜົນກຳໄລ, ສກສຍ ມີວິໄສທັດເພື່ອອານາຄົດຂອງຊຸມຊົນລາວໃນການປັບປຸງການດຳລົງຊີວິດໃຫ້ດີຂຶ້ນ ແລະ ຍືນຍົງ ທາງດ້ານການຄໍ້າປະກັນດ້ານສະບຽງອາຫານ ແລະ ໂພຊະນາການດ້ວຍການພັດທະນາກະສິກຳ ແລະ ອະນຸລັກສິ່ງແວດລ້ອມ. ສກສຍ ມີພາລະກິດເພື່ອສົ່ງເສີມກະສິກຳແບບຍືນຍົງ, ອາຫານ ແລະ ອະນຸລັກສິ່ງແວດລ້ອມ ດ້ວຍການພັດທະນາຂີດຄວາມສາມາດທາງດ້ານການສ້າງລາຍຮັບທີ່ນຳໃຊ້ວິທີການແບບມີສ່ວນຮ່ວມຂອງຊຸມຊົນທຸກຍາກ ເຊິ່ງປະກອບດ້ວຍຊາວກະສິກອນ, ຜູ້ດ້ອຍໂອກາດ, ແມ່ຍິງ, ຊາວໜຸ່ມ ແລະ ກຸ່ມຊົນເຜົ່າ. ສະມາຄົມໄດ້ມີ ໂຄງການສົ່ງເສີມກະສິກຳນິເວດເພື່ອຊາວກະສິກອນຂະໜາດນ້ອຍ ຢູ່ ແຂວງຈຳປາສັກ ແມ່ນໄດ້ຈັດຕັ້ງຢູ່ 15 ບ້ານ 2 ເມືອງ (ເມືອງໂພນທອງ, ເມືອງປາກຊ່ອງ) ແລະ 1 ນະຄອນປາກເຊ.

**II. ຄຸນນະວຸດ ແລະ ປະສົບການ**

- ຕ້ອງມີປະສົບການກ່ຽວກັບການປະເມີນຜົນກະທົບດິນຟ້າອາກາດຕໍ່ກະສິກຳ ຢ່າງໜ້ອຍ 3 ປີຂຶ້ນໄປ.
- ເຄີຍມີປະສົບການເຮັດວຽກກ່ຽວກັບການພັດທະນາຊຸມຊົນ ແລະ ການເປັນຄູຝຶກ
- ເປັນຄົນສັນຊາດລາວ
- ສາມາດເດີນທາງໄປຕ່າງແຂວງໄດ້ (ແຂວງພາກໄຕ້)
- ມີສຸຂະພາບແຂງແຮງ
- ສາມາດເຮັດວຽກແຕ່ວັນທີ 28-30/04/2025 ຫາ ວັນທີ 01/05/2025.

**III. ໜ້າທີ່ຮັບຜິດຊອບຫຼັກ**

- ອອກແບບການຝຶກອົບຮົມຮ່ວມກັບຜູ້ຮັບຜິດຊອບໂຄງການ
- ເປັນຄູຝຶກກ່ຽວກັບການສ້າງຄວາມສາມາດດ້ານກະສິກຳສະຫຼາດດ້ານດິນຟ້າອາກາດຕໍ່ການຜະລິດພືດຜັກ: ການປະເມີນຄວາມສ່ຽງ, ພື້ນຖານການປ່ຽນແປງດິນຟ້າອາກາດ, ການວິເຄາະຄວາມບອບບາງ ແລະ ການຮັບມືກັບດິນຟ້າອາກາດ, ແຜນທີ່ຄວາມສ່ຽງຂອງສວນ, ປະເມີນຊັບພະຍາກອນຂອງຊາວກະສິກອນເປົ້າໝາຍ, ປະເມີນຜົນກະທົບຊັບພະຍາກອນຂອງຊາວກະສິກອນເປົ້າໝາຍ (ປະຫວັດຂອງຜົນກະທົບ, ປະຕິທິນລະດູການປູກພືດຜັກ, ຕ່ອງໂສ້ຜົນກະທົບພືດຜັກ, ຕາຕະລາງຄວາມສ່ຽງພືດຜັກ, ສາຍພົວພັນໃນຊຸມຊົນຕໍ່ພືດຜັກ, ແນວທາງການປັບຕົວ), ແຜນການປັບຕົວພືດຜັກ, ວິທີປະເມີນມາດຕະການ ແລະ ຄວາມເປັນໄປໄດ້ໃນການປ້ອງກັນ ແລະ ປັບຕົວ ແລະ ອື່ນທີ່ກ່ຽວຂ້ອງ.
- ຂຽນບົດລາຍງານຜົນຂອງການຝຶກອົບຮົມໃຫ້ໂຄງການ

**IV. ວັນເວລາ ແລະ ສະຖານທີ**

ຈຳນວນວັນເຮັດວຽກທັງໝົດ 6 ວັນ: ກຽມເອກະສານ 1 ວັນ, ຝຶກອົບຮົມ 4 ວັນ ແລະ ຂຽນບົດລາຍງານ 1 ວັນ. ເດີນທາງຈາກວຽງຈັນ ຫາ ປາກເຊ ວັນທີ 27/04/2025, ຝຶກອົບຮົມ ວັນທີ 28-30/04/2025 ຫາ ວັນທີ 01/05/2025 ແລະ ເດີນທາງກັບນະຄອນຫຼວງວຽງຈັນ ວັນທີ 02/05/2025.
ສະຖານທີ່: ນະຄອນປາກເຊ

ທ່ານໃດສົນໃຈສາມາດຍື່ນຄຳຮ້ອງສະໝັກຂຽນດ້ວຍຕົວເອງ ພ້ອມດ້ວຍ ຊີວະປະຫວັດ. ສະແກນ ສົ່ງມາທາງອີແມ່ວ: infor.saedalaos@gmail.com

**ປິດຮັບສະໝັກ ວັນທີ 25/04/2025**